ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ກົມຂົນສົ່ງ

ເລກທີ 10579 /ກຂສ

ນະຄອນຫຼວງວຽງຈັນ, ວັນທີ 14 ພຶດສະພາ 2025

## ແຈ້ງການເຊີນເຂົ້າຮ່ວມປະມູນເປີດກວ້າງພາຍໃນ
## ການບໍລິການລົດເມດ່ວນ BRT ໃນເຂດຕົວເມືອງນະຄອນຫຼວງວຽງຈັນ

| | |
|---|---|
| **ວັນທີແຈ້ງການ:** | 14/5/2024 |
| **ຊື່ໂຄງການ:** | ADB Loan No. 3250-LAO (SF):<br>ໂຄງການຂົນສົ່ງແບບຍືນຍົງໃນຕົວເມືອງນະຄອນຫຼວງວຽງຈັນ (VSUTP) |
| **ຊື່ ແລະ ໝາຍເລກສັນຍາ:** | VSUTP-NCB-SPC-1.-2025:<br>**ການບໍລິການລົດເມດ່ວນ BRT ໃນເຂດຕົວເມືອງນະຄອນຫຼວງວຽງຈັນ** |
| **ກອງປະຊຸມກ່ອນເປີດຊອງ:** | 16/6/2025 ເວລາ 09:00 ໂມງ |
| **ກຳນົດເວລາສົ່ງຊອງ:** | 16/6/2025 ເວລາ 09:00 ໂມງ |

1. ລັດຖະບານແຫ່ງ ສປປ ລາວ ໄດ້ຮັບທຶນກູ້ຢືມ ແລະ ທຶນຊ່ວຍເຫຼືອລ້າຈາກສະຖາບັນການເງິນສາກົນ ADB, EIB, OFID ແລະ GEF ເພື່ອຈັດຕັ້ງປະຕິບັດ **ໂຄງການຂົນສົ່ງແບບຍືນຍົງໃນຕົວເມືອງນະຄອນຫຼວງວຽງຈັນ (VSUTP).** ໂຄງການກູ້ຢືມດັ່ງກ່າວນີ້ ແມ່ນເພື່ອພັດທະນາ ເສັ້ນທາງການບໍລິການຂອງລົດເມດ່ວນ BRT ເຊິ່ງຈະມີ 3 ສາຍທາງການໃຫ້ບໍລິການລົດເມໄຟຟ້າ ແລະ ຈັດຊື້ລົດເມໄຟຟ້າ. ການປະມູນຈະເປີດສຳລັບຜູ້ມີສິດເຂົ້າຮ່ວມ ພາຍໃຕ້ເງື່ອນໄຂຂອງຂະບວນການປະມູນຈັດຊື້ພາຍໃນປະເທດ.
2. ພະແນກໂຍທາທິການ ແລະ ຂົນສົ່ງ ກອງຄຸ້ມຄອງການຂົນສົ່ງໃນຕົວເມືອງ ມີຈຸດປະສົງທີ່ຈະເຮັດສັນຍາການບໍລິການລົດເມດ່ວນໄຟຟ້າ (E-Buses) ກັບ ບໍລິສັດບໍລິການລົດເມດ່ວນ BRT ຊຶ່ງແມ່ນ ວິສາຫະກິດປະສົມ ທີ່ຈະໄດ້ຖືກສ້າງຕັ້ງຂຶ້ນລະຫວ່າງ ລັດວິສາຫະກິດລົດເມນະຄອນຫຼວງ ແລະ ຄູ່ຮ່ວມງານຈາກພາກສ່ວນເອກະຊົນລາວ ແລະ ກອງຄຸ້ມຄອງການຂົນສົ່ງໃນຕົວເມືອງ ຈະຈັດຫາ ລົດເມໄຟຟ້າ, ລະບົບຄວບຄຸມການສັນຈອນລົດເມ, ອູ່ລົດ ແລະ ເຄື່ອງອາໄຫລ່ ແລະ ອຸປະກອນໃຫ້ແກ່ ບໍລິສັດບໍລິການລົດເມດ່ວນ BRT.
3. ການປະມູນພາຍໃນ ຈະຈັດຂຶ້ນໂດຍສອດຄ່ອງກັບລະບຽບການປະມູນດ້ານຄຸນວຸດທິ ແບບຂັ້ນຕອນດຽວຊອງດຽວ ຂອງ ສປປ ລາວ ແລະ ເປີດກວ້າງໃຫ້ທຸກນິຕິບຸກຄົນຜູ້ທີ່ມີສິດປະມູນ ສາມາດເຂົ້າຮ່ວມໄດ້ຕາມເງື່ອນໄຂທີ່ລະບຸໄວ້ໃນເອກະສານການປະມູນ.
4. ມີແຕ່ຜູ້ປະກອບການທີ່ມີຄຸນວຸດທິເໝາະສົມ ຈຶ່ງສາມາດເຂົ້າຮ່ວມການປະມູນໄດ້ ແລະ ຕ້ອງມີຄຸນວຸດທິຕົ້ນຕໍ (ຜູ້ເຂົ້າຮ່ວມປະມູນຕ້ອງປະກອບເອກະສານ ທີ່ເປັນຫລັກຖານສະແດງໃຫ້ເຫັນວ່າ ຕົນສາມາດສະໜອງຄວາມຕ້ອງການ ທາງດ້ານປະສົບການ ແລະ ດ້ານການເງິນ), ຊຶ່ງເອກສານດັ່ງກ່າວປະກອບມີ:
   - ກ) ປະສົບການດ້ານສັນຍາ: ຜູ້ເຂົ້າຮ່ວມປະມູນ ຕ້ອງເຄີຍປະຕິບັດສັນຍາແບບດຽວກັນ ຫຼື ຄ້າຍຄື, ໃນຖານະເປັນຜູ້ປະກອບການຫຼັກ ໃນການໃຫ້ບໍລິການຂົນສົ່ງສາທາລະນະ, 3 ປີກ່ອນໜ້ານີ້ ມູນຄ່າບໍ່ຕໍ່າກ່ວາ 5,500 ລ້ານກີບ;
   - ຂ) ຕົວເລກທຸລະກິດສະເລ່ຍປະຈໍາປີ: ຜູ້ເຂົ້າຮ່ວມປະມູນ ຕ້ອງມີຕົວເລກທຸລະກິດສະເລ່ຍປະຈໍາປີຢ່າງໜ້ອຍ 7,500 ລ້ານກີບຂຶ້ນເມືອ. ຖ້າແມ່ນທຸລະກິດທີ່ຄ້າຍຄືກັນນີ້ ແລະ ຍັງກຳລັງດຳເນີນຢູ່ໃນຊ່ວງໄລຍະເວລາ 5 ປີ ຜ່ານມາ ກໍ່ຈະມີການພິຈາລະນາເປັນພິເສດ.
   - ຄ) ຜູ້ເຂົ້າຮ່ວມປະມູນ ມີຫລັກຊັບ ຫຼື ສາມາດເຂົ້າເຖິງແຫລ່ງສິນເຊື່ອ, ວົງເງິນສິນເຊື່ອ ແລະ ການເງິນອື່ນໆທີ່ພຽງພໍ ຕອບສະໜອງໄດ້ ຄວາມຕ້ອງການກະແສເງິນສົດ ໃນນີ້ເທົ່າກັບ 3,000 ລ້ານກີບ ຂຶ້ນເມືອ;
   - ງ) ຜູ້ເຂົ້າຮ່ວມປະມູນ ມີພະນັກງານວິຊາການພຽງພໍ, ມີທີມງານບໍລິຫານຈັດການທຸລະກິດ ບໍລິການລົດເມດ່ວນ, ທີ່ມີຄວາມຊໍານິຊໍານານ ພ້ອມດ້ວຍຊີວະປະຫວັດຂອງພະນັກງານ. ໂດຍສະເພາະ ເຄີຍບໍລິຫານພະນັກງານຢ່າງໜ້ອຍ 100 ຄົນຂຶ້ນເມືອ;

ຈ) ຜູ້ເຂົ້າຮ່ວມປະມູນ ມີທີ່ຕັ້ງຢູ່ໃນ ສປປ ລາວ ແລະ ສາມາດປະຕິບັດຂໍ້ຜູກພັນດ້ານການດໍາເນີນງານ, ການຮັບປະກັນ, ການບໍາລຸງຮັກສາ ແລະ ສ້ອມແປງ ຕາມທີ່ໄດ້ກໍານົດໄວ້ ຢູ່ໃນເງື່ອນໄຂຂອງສັນຍາ ແລະ/ຫຼື ຂໍ້ກໍານົດທາງດ້ານເຕັກນິກ;

ສ) ຜູ້ເຂົ້າຮ່ວມປະມູນ ເຮັດຈົດໝາຍ ສະແດງເຈດຈໍານົງຂອງຕົນເອງ ຢາກເຂົ້າຮ່ວມເປັນຄູ່ສັນຍາ ດໍາເນີນການບໍລິການລົດເມດ່ວນ;

ຊ) ຜູ້ເຂົ້າຮ່ວມ ຈະຕ້ອງຍອມຮັບການຮ່ວມເປັນສ່ວນໜຶ່ງ ຂອງບໍລິສັດ ບໍລິການລົດເມ ຮ່ວມກັບ ລັດວິສາຫະກິດລົດເມນະຄອນຫຼວງ ແລະ ຜູ້ທີ່ສະມັກເຂົ້າຮ່ວມປະມູນ ກໍ່ເປັນທີ່ຍອມຮັບຂອງ ລັດວິສາຫະກິດລົດເມນະຄອນຫຼວງ, ເຊິ່ງທັງສອງ ໄດ້ມີຮ່າງສັນຍາການຮ່ວມຮຸ້ນ ແລະ ສະແດງເຈດຈໍານົງຮ່ວມກັນ ກ່ອນການຍື່ນເອກະສານປະມູນ. ເງື່ອນໄຂຄຸນວຸດທິ ໄດ້ອະທິບາຍໄວ້ຢ່າງຈະແຈ້ງ ຢູ່ໃນເອກະສານປະມູນ.

5. ຜູ້ທີ່ສົນໃຈເຂົ້າຮ່ວມການປະມູນສາມາດຂໍຂໍ້ມູນເພີ່ມເຕີມ ແລະ ເອກະສານການປະມູນຕາມທີ່ຢູ່ລຸ່ມນີ້ ເລີ່ມແຕ່ເວລາ 08:00 ຫາ 17:00; ວັນຈັນ ເຖິງ ວັນສຸກ.

| | | |
|---|---|---|
| ຮຽນ | : | **ທ່ານ ປອ. ບຸນຕາ ອ່ອນນາວົງ**<br>**ຫົວໜ້າ ກົມຂົນສົ່ງ, ກະຊວງໂຍທາທິການ ແລະຂົນສົ່ງ** |
| ທີ່ຢູ່ | : | ຖະໜົນ ລ້ານຊ້າງ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ |
| ຊັ້ນ/ເບີຫ້ອງ | : | ກົມຂົນສົ່ງ, ຊັ້ນ 1 ຕຶກກະຊວງໂຍທາທິການ ແລະຂົນສົ່ງ |
| ແຂວງ | : | ນະຄອນຫຼວງວຽງຈັນ |
| ເບີໂທລະສັບ | : | **+856-21-415563** |
| E-mail | : | bounta_ov@yahoo.com |

| | |
|---|---|
| ຜູ້ປະສານງານ | ທ່ານ ຄໍາພັນ ວັນທະນາ, ຫົວໜ້າໂຄງການ |
| ທີ່ຢູ່ | ຖະໜົນເສດຖາທິລາດ, ບ້ານເກົ້າຍອດ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ |
| ຊັ້ນ/ເບີຫ້ອງ | ຊັ້ນ3 ຕຶກ ຫ້ອງການບໍລິຫານ ຄຸ້ມຄອງຕົວເມືອງ ນະຄອນຫຼວງວຽງຈັນ (VCOM) |
| ເບີໂທລະສັບ | +856-20 55404545 |
| E-mail | k_vanthana@yahoo.com |

໖. ຜູ້ທີ່ມີຄວາມສົນໃຈ ເຂົ້າຮ່ວມການປະມູນ ສາມາດຍື່ນໃບສະໝັກເປັນລາຍລັກອັກສອນ ແລະ ຊື້ເອົາ ເອກະສານການປະມູນ ຕາມທີ່ຢູ່ຂ້າງເທິງ ແລະ ເມື່ອຈ່າຍເງິນຄ່າທໍານຽມ ແລ້ວຈະບໍ່ສາມາດຖອນຄືນໄດ້. ຄ່າທໍານຽມເອກະສານ ຊຸດໜຶ່ງ 3,300,000 ກີບ. ວິທີຊໍາລະຄ່າເອກະສານ ແມ່ນເປັນເງິນສົດ.

7. ເຊີນຜູ້ຕາງໜ້າຜູ້ເຂົ້າຮ່ວມປະມູນ ເຂົ້າຮ່ວມກອງປະຊຸມ ຖາມ-ຕອບ ກ່ອນມື້ເປີດຊອງປະມູນໃນວັນທີ 29/5/2025, ເວລາ 09.00 ໂມງ ຕາມທີ່ລະບຸ ໄວ້ໃນເອກະສານປະມູນ. ຈຸດປະສົງຂອງກອງປະຊຸມນີ້ແມ່ນເພື່ອໃຫ້ຄວາມຈະແຈ້ງຕໍ່ບັນຫາຕ່າງໆ ທີ່ຜູ້ເຂົ້າຮ່ວມປະມູນມີຄວາມສົນໃຈ.

8. ຊອງປະມູນຈະຕ້ອງຍື່ນຢູ່ສະຖານທີ່ ຕາມທີ່ໄດ້ກໍານົດໄວ້ຂ້າງເທິງນີ້ ໃນເວລາ 9.00 ໂມງ ຂອງວັນທີ 16/06/2025 ຫຼືກ່ອນນັ້ນ. ຊອງປະມູນແບບເອເລັກໂຕຣນິກຈະບໍ່ຮັບພິຈາລະນາ, ຊອງປະມູນທີ່ຍື່ນຊ້າກວ່າກໍານົດ ຈະຖືກປະຕິເສດບໍ່ຮັບເອົາພິຈາລະນາ. ຊອງປະມູນທຸກຊອງ ຈະເປີດຊ້ອງໜ້າ ບັນດາຕົວແທນຜູ້ເຂົ້າຮ່ວມປະມູນ ໃນເວລາ 09.00 ໂມງ ຢູ່ສະຖານທີ່ ທີ່ໄດ້ກໍານົດໄວ້ຂ້າງເທິງນີ້.

9. ທຸກໆຊອງປະມູນຕ້ອງມີໃບແຈ້ງຄໍ້າປະກັນການປະມູນ ຄັດຕິດມາພ້ອມ ຕາມທີ່ໄດ້ກໍານົດໄວ້ຢູ່ໃນເອກະສານປະມູນ.

10. ເຈົ້າຂອງໂຄງການຈະບໍ່ຮັບຜິດຊອບຄ່າໃຊ້ຈ່າຍໃດໆກ່ຽວກັບການກະກຽມ ແລະ ການຍື່ນຊອງປະມູນຂອງທ່ານ.

ຮຽນມາດ້ວຍຄວາມນັບຖື.

**ຫົວໜ້າກົມຂົນສົ່ງ**

ດຣ. ບຸນຕາ ອ່ອນນາວົງ